ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 1027 /ກງ
ນະຄອນຫຼວງວຽງຈັນ, ວັນທີ 10 ເມສາ 2020

# ແຈ້ງການ

ເຖິງ : ທ່ານຜູ້ອໍານວຍການ ວິສາຫະກິດ ສ່ວນບຸກຄົນ, ນິຕິບຸກຄົນ ທີ່ເປັນນັກລົງທຶນ ທັງພາຍໃນ ແລະຕ່າງປະເທດ ໃນຂອບເຂດທົ່ວປະເທດ

ເລື່ອງ: ການຈັດຕັ້ງປະຕິບັດ ພັນທະອາກອນ ຕາມຂໍ້ຕົກລົງ ວ່າດ້ວຍການກໍານົດນະໂຍບາຍ ແລະມາດຕະການ ເພື່ອຫລຸດຜ່ອນຜົນກະທົບຈາກການລະບາດຂອງພະຍາດ COVID-19

- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນສະບັບປັບປຸງ ເລກທີ 66/ສພຊ, ລົງວັນທີ 17 ມິຖຸນາ 2019;
- ອີງຕາມ ຄໍາສັ່ງຂອງທ່ານນາຍົກລັດຖະມົນຕີ ເລກທີ 06/ນຍ, ລົງວັນທີ 29 ມີນາ 2020 ກ່ຽວກັບການເພີ່ມທະວີມາດຕະການສະກັດກັ້ນ, ກັນກາດລະບາດ, ຄວບຄຸມ ແລະກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດ COVID-19;
- ອີງຕາມ ຂໍ້ຕົກລົງຂອງທ່ານນາຍົກລັດຖະມົນຕີ ເລກທີ 31/ນຍ, ລົງວັນທີ 02 ເມສາ 2020 ວ່າດ້ວຍການກໍານົດນະໂຍບາຍ ແລະມາດຕະການ ເພື່ອຫລຸດຜ່ອນຜົນກະທົບຈາກການລະບາດຂອງພະຍາດ COVID-19 ຕໍ່ເສດຖະກິດຂອງລາວ.

## ກະຊວງການເງິນແຈ້ງການ ດັ່ງນີ້:

1. ໃຫ້ປະຕິບັດນະໂຍບາຍຍົກເວັ້ນການເກັບອາກອນລາຍໄດ້ເງິນເດືອນ ຂອງຜູ້ອອກແຮງງານທັງໝົດທັງພາກລັດ ແລະເອກະຊົນ ທີ່ມີລາຍໄດ້ 5 ລ້ານກີບລົງມາ ໃນໄລຍະ 3 ເດືອນ (ເດືອນເມສາ, ພຶດສະພາ ແລະ ມິຖຸນາ). ແຕ່ ສໍາລັບຜູ້ມີລາຍໄດ້ເງິນເດືອນ ເກີນ 5 ລ້ານກີບຂຶ້ນໄປ ໃຫ້ຄິດໄລ່ ຫັກຍົກເວັ້ນ ຫ້າລ້ານກີບ ກ່ອນ ແລ້ວຈຶ່ງຄິດໄລ່ຕາມຂັ້ນທະວີຄູນຕາມທີ່ໄດ້ກໍານົດໄວ້ໃນມາດຕາ 39 ຂອງກົດໝາຍວ່າດ້ວຍອາກອນລາຍໄດ້ສະບັບເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019; ສໍາລັບໄລຍະເວລາ ການແຈ້ງ ແລະຊໍາລະອາກອນ ໃຫ້ປະຕິບັດດັ່ງນີ້:
   - ອາກອນລາຍໄດ້ເງິນເດືອນ ຂອງເດືອນ ເມສາ 2020 ໃຫ້ແຈ້ງ ແລະຊໍາລະອາກອນ ບໍ່ໃຫ້ກາຍວັນທີ 20 ພຶດສະພາ 2020;
   - ອາກອນລາຍໄດ້ເງິນເດືອນ ຂອງເດືອນ ພຶດສະພາ 2020 ໃຫ້ແຈ້ງ ແລະຊໍາລະອາກອນ ບໍ່ໃຫ້ກາຍວັນທີ 20 ມິຖຸນາ 2020;
   - ອາກອນລາຍໄດ້ເງິນເດືອນ ຂອງເດືອນ ມິຖຸນາ 2020 ໃຫ້ແຈ້ງ ແລະຊໍາລະອາກອນ ບໍ່ໃຫ້ກາຍວັນທີ 20 ກໍລະກົດ 2020;
2. ປະຕິບັດນະໂຍບາຍ ຍົກເວັ້ນການເກັບອາກອນລາຍໄດ້ ຂອງຈຸນລະວິສາຫະກິດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 29 ຂໍ້ທີ 2 ຂອງກົດຫມາຍວ່າດ້ວຍອາກອນລາຍໄດ້ ເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019 ເປັນໄລຍະ 3 ເດືອນ (ເດືອນເມສາ, ພຶດສະພາ ແລະ ມິຖຸນາ) , ສໍາລັບຫົວໜ່ວຍວິສາຫະກິດໃດຫາກໄດ້ມອບອາກອນລ່ວງໜ້າຕາມສັນຍາແມ່ນສາມາດນໍາເອົາຈໍານວນເງິນອາກອນຂອງ ເດືອນເມສາ, ພຶດສະພາ ແລະ ເດືອນມິຖຸນາ ໄປຫັກອອກໄດ້ໃນເດືອນຕໍ່ໄປຈົນກວ່າຈະໝົດ;

3. ສຳລັບ ຜູ້ທີ່ປະຕິບັດການແຈ້ງເສຍອາກອນລາຍໄດ້ເງິນເດືອນແບບມອບເໝົາ ຫຼື ປະຕິບັດຕາມອັດຕາຄົງທີ່ ຕາມສັນຍາສຳປະທານທີ່ລັດຖະບານໄດ້ລົງນາມນັ້ນ ໃຫ້ແຈ້ງມອບຕາມສັນຍາໂຄງ ການທີ່ໄດ້ກຳນົດໄວ້(ໝາຍວ່າບໍ່ໄດ້ຮັບນະໂຍບາຍຍົກເວັ້ນຕາມຂໍ້ 1 ຂ້າງເທິງ);
4. ວິທີການແຈ້ງມອບອາກອນລາຍໄດ້ເງິນເດືອນສຳລັບການຍົກເວັ້ນ 5 ລ້ານກີບ ແມ່ນໃຫ້ຜູ້ແຈ້ງມອບອາກອນເງິນເດືອນຕາມຂັ້ນຕອນ ແລະ ວິທີການປົກກະຕິ ທີ່ເຄີຍແຈ້ງຜ່ານມາ, ລະບົບ TaxRIS ຈະຄິດໄລ່ຍົກເວັ້ນ 5 ລ້ານກີບໃຫ້ແບບໂອໂຕໂນມັດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດ.

ລັດຖະມົນຕີກະຊວງການເງິນ

ສິນດີ ດວງດີ